**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພະແນກສາທາລະນະສຸກແຂວງ

ເລກທີ..211.7../ ສທຂ
ຜົ້ງສາລີ, ລົງວັນທີ..9.... ພະຈິກ 2025

# ໜັງສືແຈ້ງເຊີນ

ເຖິງ: ບັນດາທ່ານຫົວໜ້າ ຫຼື ອຳນວຍການ ບໍລິສັດ ກໍ່ສ້າງເຄຫາສະຖານ ທີ່ນັບຖືຢ່າງສູງ !

ເລື່ອງ: ເຂົ້າຮ່ວມປະມູນຫົວໜ່ວຍລາຄາ ໂຄງການກໍ່ສ້າງສຸກສາລາ ໂພນໄຊ, ເມືອງໃໝ່, ແຂວງຜົ້ງສາລີ. (ໂດຍທຶນສະໜັບສະໜູນຈາກ ອົງການໂກຟີ ສ ເກົາຫລີ, ປະຈຳປີ 2024).

- **ອີງຕາມ** ຂໍ້ຕົກລົງຂອງ ເຈົ້າແຂວງ ສະບັບເລກທີ 1021/ຂຜລ, ລົງວັນທີ 02 ພະຈິກ 2022 ວ່າດ້ວຍການຈັດ ຕັ້ງ ແລະ ການເຄື່ອນໄຫວຂອງ ພະແນກສາທາລະນະສຸກແຂວງ.
- **ອີງຕາມ** ໜັງສືສະເໜີຂອງ ສູນສຸຂະພາບແມ່ ແລະ ເດັກ ສະບັບເລກທີ 2434/ສສມດ, ລົງວັນທີ 10 ຕຸລາ 2025 ກ່ຽວກັບສະເໜີໃຫ້ແຂວງ ຈັດຕັ້ງປະຕິບັດ ການປຸກສ້າງສຸກສາລາໂພນໄຊ ເມືອງໃໝ່, ແຂວງຜົ້ງສາລີ ຕາມແບບຂອງກົມປິ່ນປົວ - ຟື້ນຟູໜ້າທີ່ການ ກະຊວງສາທາລະນະສຸກ.
- **ອີງຕາມ** ບົດບັນທຶກກອງປະຊຸມປຶກສາຫາລື ພາຍໃນຄະນະຮັບຜິດຊອບ ຈັດຊື້-ຈັດຈ້າງ ອຸປະກອນ ຂອງ ສ ເກົາຫລີ (KOFIH) ແຂວງຜົ້ງສາລີ ສະບັບລົງວັນທີ............................

ພະແນກສາທາລະນະສຸກ ແຂວງຜົ້ງສາລີ ໃນນາມເປັນເຈົ້າຂອງໂຄງການຈັດຕັ້ງປະຕິບັດ ໂຄງການປັບປຸງຄຸນນະພາບການບໍລິການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ. ໂດຍຜ່ານການສ້າງຄວາມເຂັ້ມແຂງລະບົບການດູແລສຸຂະພາບໃນ ສປປ ລາວ ໄລຍະ III (2022–2027). ສະບັບລົງວັນທີ 25 ພຶດສະພາ 2023. ມີຈຸດປະສົງແຈ້ງເຊີນມາຍັງບັນດາທ່ານ ອຳນວຍການບໍລິສັດ ທີ່ມີເງື່ອນໄຂພ້ອມໃນການເຂົ້າຮ່ວມປະມູນຫົວໜ່ວຍລາຄາ ໂຄງການການກໍ່ສ້າງສຸກສາລາ ໂພນໄຊ, ເມືອງໃໝ່, ແຂວງຜົ້ງສາລີ. ລາຍລະອຽດເງື່ອນໄຂເຂົ້າຮ່ວມປະມູນຫົວໜ່ວຍລາຄາໂຄງການດັ່ງກ່າວ ມີດັ່ງນີ້:

**1. ຄຸນສົມບັດ :**

1) ບໍລິສັດ ຕ້ອງມີຄວາມຊຳນານດ້ານວິຊາສະເພາະ ແລະ ຄວາມສາມາດຕອບສະໜອງໄດ້ຕາມມາດຖານເຕັກນິກ, ທາງດ້ານຄຸນນະພາບ ແລະ ຈຳນວນ ຕາມເນື້ອໃນໜັງສືແຈ້ງການສະບັບນີ້;

2) ບໍລິສັດ ຕ້ອງມີປະສົບການຮັບໂຄງການດ້ານນີ້ມາກ່ອນ (ພ້ອມທັງຢືນຫຼັກຖານການຜ່ານງານ).

**2. ເງື່ອນໄຂ** :

1) ບໍລິສັດ ຕ້ອງມີໃບດຳເນີນທຸລະກິດ ແລະ ທະບຽນອາກອນປະຈຳປີ 2024 ຫຼື 2025 ( ວັນ, ເດືອນ ແລະ ປີ) ໃນມື້ຮັບປະມູນຫົວໜ່ວຍລາຄາກໍ່ສ້າງ);

2) ບໍລິສັດ ຕ້ອງມີວິຊາການ, ກຳລັງແຮງງານເພື່ອໄປປະຈຳ ແລະ ກໍ່ສ້າງໂຄງການດັ່ງກ່າວ;

3) ບໍລິສັດ ຕ້ອງມີແຜນດຳເນີນງານການກໍ່ສ້າງໂຄງການດັ່ງກ່າວຢ່າງລະອຽດ;

4) ບໍລິສັດ ຕ້ອງມີໃບຢັ້ງຢືນພັດທະອາກອນຕ່າງໆ ໃນໄລຍະຜ່ານມາ;

5) ບໍລິສັດ ຕ້ອງມີໃບຢັ້ງຢືນຖານະດ້ານການເງິນຍອດເຫຼືອໃນບັນຊີ ທີ່ຢັ້ງຢືນຈາກທະນາຄານຢ່າງໜ້ອຍ 50% ຂອງມູນຄ່າການກໍ່ສ້າງໂຄງການດັ່ງກ່າວ;

6) ບໍລິສັດ ຕ້ອງມີຄວາມພ້ອມ ພາຫະນະອຸປະກອນຮັບໃຊ້ ແລະ ວັດສະດຸຕ່າງໆ ເພື່ອນຳໃຊ້ເຂົ້າໃນການກໍ່ສ້າງ ໂຄງການດັ່ງກ່າວ.

**3. ໄລຍະເວລາຂາຍຊອງ ແລະ ເປີດຊອງ.**

1) ເລີ່ມຂາຍຊອງປະມູນ ໃນວັນທີ 10 ພະຈິກ ເຖິງ ວັນທີ 10 ທັນວາ 2025 ລວມຈຳນວນມື້ຂາຍຊອງປະມູນ ແມ່ນເປັນເວລາ 30 ວັນ, ໃນໂມງລັດຖະການ. ສະຖານທີ່ຂາຍຊອງປະມູນແມ່ນຢູ່ ພະແນກສາທາລະນະສຸກ ແຂວງ ຜົ້ງສາລີ (ສຳລັບຄ່າຊອງປະ ມູນແມ່ນຂາຍຊອງລະ 1.000.000 ກີບ/ຊອງ) ຕາມບົດບັນທຶກກອງປະຊຸມປຶກສາຫາລື ພາຍໃນຄະນະ ຮັບຜິດຊອບຊື້ນຳລວມ ແລະ ອະນຸກຳມະການປະມູນໂຄງການກໍ່ສ້າງພື້ນຖານໂຄງລ່າງ ແລະ ຈັດຊື້-ຈັດຈ້າງ ອຸປະກອນການແພດ ຂອງ (ສ ເກົາຫລີ ຫຼື KOFIH) ຕາມຂໍ້ຕົກລົງຂອງເຈົ້າແຂວງ ສະບັບເລກທີ 382/ຂຜລ, ລົງວັນທີ 12 ພຶດສະພາ 2025. ໃນຄັ້ງວັນທີ ..................... 2025;

2) ບໍລິສັດ ຕ້ອງສົ່ງຊອງປະມູນທີ່ວໜ່ວຍລາຄາຂອງຕົນ ກ່ອນເວລາ 8 ໂມງ 30 ນາທີ, ຂອງວັນທີ 15 ທັນວາ 2025, ຖ້າຫາກກາຍເວລາທີ່ທາງຄະນະຮັບຜິດຊອບກຳນົດໄວ້ ຈະບໍ່ໄດ້ຮັບການພິຈາລະນາຕາມເງື່ອນໄຂໃດໆ;

3) ພິທີເປີດຊອງປະມູນໂຄງການດັ່ງກ່າວ ຈະໄດ້ຈັດຂຶ້ນໃນເວລາ **9 ໂມງ 00 ນາທີ**, ຂອງວັນທີ 16 ທັນວາ 2025 ທີ່ຫ້ອງປະຊຸມ ພະແນກສາທາລະນະສຸກແຂວງ;

4) ລາຍລະອຽດຕາຕະລາງ ໃບປະເມີນທີ່ວໜ່ວຍລາຄາ ພ້ອມທັງແບບແຕ້ມໂຄງການກໍ່ສ້າງ ສຸກສາລາ, ໃພນໄຊ, ແຂວງຜົ້ງສາລີ ແມ່ນໄດ້ຕິດຄັດມາພ້ອມນີ້.

**ດັ່ງນັ້ນ,** ຈຶ່ງແຈ້ງເຊີນມາຍັງບັນດາທ່ານອຳນວຍການບໍລິສັດ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນທີ່ວໜ່ວຍລາຄາ ການກໍ່ສ້າງໂຄງການດັ່ງກ່າວຮັບຊາບ ແລະ ຈັດຕັ້ງປະຕິບັດຕາມເນື້ອໃນໜັງສືແຈ້ງເຊີນສະບັບນີ້ດ້ວຍ.

ແຈ້ງເຊີນມາດ້ວຍຄວາມນັບຖືຢ່າງສູງ !

**ຫົວໜ້າພະແນກ**

ພະແນກ ສາທາລະນະສຸກ

**ໄຊນຸພາບ ສຸຈັນ**

**ຕິດຕໍ່ພົວພັນ :**

1) **ທ່ານ ບຸນເພັດ ຕັນສຸພັນ ຮອງຫົວໜ້າ ພະແນກສາທາລະນະສຸກແຂວງ. ໂທ: 020 2293 5559, 020 9588 8828, E-mail : bounphettsp @yahoo.com;**

2) **ທ່ານ ສະແຫວງ ສຸລິກັນ ວິຊາການຮັບຜິດຊອບການຈັດຊື້-ຈັດຈ້າງ ຂອງໂຄງການ ໂຄງການປັບປຸງຄຸນນະພາບ ການ ບໍລິການສຸຂະພາບຈະເລີນພັນ, ແມ່, ເດັກເກີດໃໝ່, ເດັກນ້ອຍ ແລະ ໄວໜຸ່ມ. ໂທ : 020 5988 9608.**